ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

0358

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ເລກທີ ................ /ກຊສ

ນະຄອນຫຼວງວຽງຈັນ, ວັນທີ 24 ກຸມພາ 2023

# ຂໍ້ຕົກລົງ
# ວ່າດ້ວຍບັນຊີການຈັດແບ່ງກຸ່ມໂຄງການລົງທຶນ ຫຼື ກິດຈະການຕ່າງໆ ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ

- ອີງຕາມ ມາດຕາ 21 ແລະ 22 ຂອງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 573/ນຍ, ລົງວັນທີ 20 ກັນຍາ 2021;
- ອີງຕາມ ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 389/ລບ, ລົງວັນທີ 20 ຕຸລາ 2022;
- ອີງຕາມ ໜັງສືສະເໜີຂອງກົມສິ່ງແວດລ້ອມ ສະບັບເລກທີ 0276/ກຊສ.ກສລ, ລົງວັນທີ 26 ມັງກອນ 2023.

## ລັດຖະມົນຕີ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດບັນຊີການຈັດແບ່ງກຸ່ມໂຄງການລົງທຶນ ຫຼື ກິດຈະການຕ່າງໆ ທີ່ຕ້ອງດຳເນີນການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ການສ້າງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 2 ບັນຊີໂຄງການລົງທຶນ ຫຼື ກິດຈະການຕ່າງໆ ທີ່ຕ້ອງດຳເນີນການສຶກສາເບື້ອງຕົ້ນ ກ່ຽວກັບ ຜົນກະທົບຕໍ່ສິ່ງແວດລ້ອມ**

ບັນຊີໂຄງການລົງທຶນ ຫຼື ກິດຈະການຕ່າງໆ ທີ່ຕ້ອງດຳເນີນການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ມີດັ່ງນີ້:

| ລ/ດ | ປະເພດໂຄງການລົງທຶນ ຫຼື ກິດຈະການຕ່າງໆ<br>ຕ້ອງດຳເນີນການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ |
|---|---|
| 1. | **ໂຄງການລົງທຶນ ຫຼື ກິດຈະການ ພະລັງງານ:**<br>– ການພັດທະນາໂຄງການໄຟຟ້າພະລັງງານນ້ຳ ແຕ່ 1 ຫາ 5 ເມກາວັດ;<br>– ການພັດທະນາໂຄງການໄຟຟ້າພະລັງງານອາຍຊີວະພາບ ທຸກຂະໜາດ;<br>– ການພັດທະນາໂຄງການໄຟຟ້າພະລັງງານຊີວະມວນ ຕ່ຳກວ່າ 5 ເມກາວັດ;<br>– ການພັດທະນາໂຄງການໄຟຟ້າພະລັງງານລົມ ຕ່ຳກວ່າ 50 ເມກາວັດ;<br>– ການພັດທະນາໂຄງການໄຟຟ້າແສງຕາເວັນ ຕ່ຳກວ່າ 50 ເມກາວັດ. |

| | |
|---|---|
| 2. | **ໂຄງການລົງທຶນ ຫຼື ກິດຈະການ ນໍ້າມັນເຊື້ອໄຟ:**<br>– ການສ້າງສາງເກັບນໍ້າມັນ ແຕ່ 5.000 ຫາ 50.000 ແມັດກ້ອນ;<br>– ການສ້າງຕັ້ງປໍ້ານໍ້າມັນ ແປດ ຫົວສີດຂຶ້ນໄປ ແລະ ມີຮ້ານບໍລິການຕ່າງໆທີ່ຕິດພັນກັບການບໍລິການປໍ້ານໍ້າມັນ. |
| 3. | **ໂຄງການລົງທຶນ ຫຼື ກິດຈະການ ແຮ່ທາດ:**<br>– ການຂຸດຄົ້ນແຮ່ທາດອະໂລຫະ ສໍາລັບການກໍ່ສ້າງ ເຊັ່ນ: ຊາຍ, ຫີນແຮ່ ຢູ່ໃນແມ່ນໍ້າ ທີ່ມີບໍລິມາດຂຸດຄົ້ນ ໜ້ອຍກວ່າ 50.000 ແມັດກ້ອນ ຕໍ່ປີ ແລະ/ຫຼື ເນື້ອທີ່ໜ້ານໍ້າ ບໍ່ເກີນ 4 ເຮັກຕາ;<br>– ການຂຸດຄົ້ນແຮ່ທາດອະໂລຫະ ສໍາລັບການກໍ່ສ້າງ ເຊັ່ນ: ຫີນຜາ, ບໍ່ດິນ, ຊາຍ ຢູ່ເທິງໜ້າດິນ ທີ່ມີບໍລິມາດຂຸດຄົ້ນ ໜ້ອຍກວ່າ 100.000 ແມັດກ້ອນ ຕໍ່ປີ ແລະ/ຫຼື ເນື້ອທີ່ດິນ ບໍ່ເກີນ 4 ເຮັກຕາ. |
| 4. | **ໂຄງການລົງທຶນ ຫຼື ກິດຈະການ ກະສິກໍາ ແລະ ປ່າໄມ້:**<br>– ການປູກພືດສະບຽງອາຫານ, ພືດເປັນຢາ ແລະ ພືດຊະນິດອື່ນໆ ທຸກຂະໜາດ;<br>– ການປູກໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອຈຸດປະສົງທາງດ້ານການຄ້າ ໃນເຂດທີ່ດິນປ່າຊຸດໂຊມ ແລະ ທີ່ດິນປ່າປອກໂຫຼ້ນ ທີ່ຢູ່ໃນເຂດປ່າຜະລິດ ຕາມແຜນຈັດສັນ ທຸກຂະໜາດ;<br>– ການດໍາເນີນກິດຈະການລະບົບນິເວດປ່າໄມ້ ໃນເຂດປ່າປ້ອງກັນ, ປ່າສະຫງວນ ແຫ່ງຊາດ ແລະ ປ່າຜະລິດ ທີ່ລັດຈັດສັນໃຫ້ ທຸກຂະໜາດ;<br>– ການປູກພືດອຸດສາຫະກໍາ ຫຼື ພືດພະລັງງານ ເປັນຕົ້ນ ມັນຕົ້ນ, ອ້ອຍ, ສາລີ, ປາມ, ໝາກເຍົາ ທຸກຂະໜາດ;<br>– ການລ້ຽງແມງໄມ້ທຸກຊະນິດ ເພື່ອຈຸດປະສົງທາງດ້ານການຄ້າ ທຸກຂະໜາດ;<br>– ການລ້ຽງສັດໃຫຍ່ ເປັນຕົ້ນ ງົວ, ຄວາຍ, ມ້າ, ອູດ, ນົກກະຈອກເທດ ທີ່ນອນໃນເຂດທຸກຍາກ, ຫ່າງໄກສອກຫຼີກ, ໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ບໍ່ເອື້ອອໍານວຍແກ່ການລົງທຶນ ແຕ່ 500 ຫາ 3.000 ໂຕ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການລ້ຽງສັດໃຫຍ່ ເປັນຕົ້ນ ງົວ, ຄວາຍ, ແບ້, ມ້າ, ອູດ, ນົກກະຈອກເທດ ທີ່ນອນໃນເຂດທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອໍານວຍ ແກ່ການລົງທຶນ ແຕ່ 100 ຫາ 300 ໂຕ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການລ້ຽງໝູ ທີ່ນອນໃນເຂດທຸກຍາກ, ຫ່າງໄກສອກຫຼີກ, ໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ບໍ່ເອື້ອອໍານວຍແກ່ການລົງທຶນ ແຕ່ 300 ຫາ 2.000 ໂຕ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການລ້ຽງໝູ ທີ່ນອນໃນເຂດທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອໍານວຍແກ່ການລົງທຶນ ແຕ່ 50 ຫາ 200 ໂຕ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການລ້ຽງສັດປີກ ເປັນຕົ້ນ ເປັດ, ໄກ່, ຫ່ານ, ນົກ ທີ່ນອນໃນເຂດທຸກຍາກ, ຫ່າງໄກສອກຫຼີກ, ໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ບໍ່ເອື້ອອໍານວຍ ແກ່ການລົງທຶນ ແຕ່ 5.000 ໂຕ ຂຶ້ນໄປ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການລ້ຽງສັດປີກ ເປັນຕົ້ນ ເປັດ, ໄກ່, ຫ່ານ, ນົກ ທີ່ນອນໃນເຂດທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອໍານວຍແກ່ການລົງທຶນແຕ່ 1.000 ໂຕ ຂຶ້ນໄປ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການລ້ຽງແຂ້ ເພື່ອຈຸດປະສົງທາງດ້ານການຄ້າ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ ທຸກຂະໜາດ;<br>– ການລ້ຽງປາ ຫຼື ສັດນໍ້າອື່ນ ດ້ວຍການຂຸດເປັນໜອງ ທີ່ນອນໃນເຂດທຸກຍາກ, ຫ່າງໄກສອກຫຼີກ, ໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ບໍ່ເອື້ອອໍານວຍແກ່ການລົງທຶນ ມີເນື້ອທີ່ດິນ ແຕ່ 20 ເຮັກຕາ ຂຶ້ນໄປ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການລ້ຽງປາ ຫຼື ສັດນໍ້າອື່ນດ້ວຍການຂຸດເປັນໜອງ ທີ່ນອນໃນເຂດທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອໍານວຍແກ່ການລົງທຶນ ມີເນື້ອທີ່ດິນ ແຕ່ 10 ເຮັກຕາ ຂຶ້ນໄປ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ; |

| | |
|---|---|
| | – ການລ້ຽງປາ ຫຼື ສັດນ້ຳອື່ນ ແບບກະຊັງຕາມແມ່ນ້ຳທຳມະຊາດ ທີ່ນອນໃນເຂດທຸກຍາກ, ຫ່າງໄກສອກຫຼີກ, ໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ບໍ່ເອື້ອອຳນວຍແກ່ການລົງທຶນ ມີເນື້ອທີ່ດິນ ແຕ່ 1.000 ຕາແມັດ ຂຶ້ນໄປ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການລ້ຽງປາ ຫຼື ສັດນ້ຳອື່ນ ແບບກະຊັງຕາມແມ່ນ້ຳທຳມະຊາດ ທີ່ນອນໃນເຂດທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອຳນວຍແກ່ການລົງທຶນ ມີເນື້ອທີ່ດິນ ແຕ່ 500 ຕາແມັດ ຂຶ້ນໄປ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ. |
| 5. | **ໂຄງການລົງທຶນ ຫຼື ກິດຈະການ ອຸດສາຫະກຳປຸງແຕ່ງ:**<br>**1. ການປຸງແຕ່ງຜະລິດຕະພັນສະບຽງອາຫານ:**<br>– ບ່ອນຂ້າສັດຍ່ອຍ ແລະ ໂຮງງານຂ້າສັດ ຂະໜາດນ້ອຍ ປະເພດ ງົວ, ຄວາຍ, ໝູ, ແກະ, ແບ້ ແລະ ສັດປີກ ທຸກຂະໜາດ;<br>– ໂຮງງານຜະລິດ ຫຼື ປຸງແຕ່ງ ຫຼື ຮັກສາອາຫານ ທີ່ຜະລິດຈາກສັດ ຫຼື ພືດ ເປັນຕົ້ນ ຊີ້ນ, ປາ, ອາຫານທະເລ, ນ້ຳໝາກໄມ້, ນົມ ແລະ ຜະລິດຕະພັນຈາກນົມ, ອາຫານຈາກມັນ, ເຜືອກ ຈຳນວນຫຼາຍກວ່າ 10 ໂຕນ ຕໍ່ມື້ຂຶ້ນໄປ;<br>– ໂຮງງານຜະລິດແປ້ງ ຈຳນວນ ແຕ່ 30.000 ຫາ 100.000 ໂຕນ ຕໍ່ປີ;<br>– ໂຮງງານຜະລິດ ເຂົ້າປຸ້ນ, ເຂົ້າປຽກ, ເສັ້ນໝີ່, ເສັ້ນເຝີ, ມະກາໂຣນີ, ແລະ ອື່ນໆ ຈຳນວນ ຫຼາຍກວ່າ 10 ໂຕນ ຕໍ່ມື້ຂຶ້ນໄປ;<br>– ໂຮງງານປຸງແຕ່ງຜັກ, ໜໍ່ໄມ້, ໝາກໄມ້ ຈຳນວນຫຼາຍກວ່າ 10 ໂຕນ ຕໍ່ມື້ຂຶ້ນໄປ;<br>– ໂຮງງານຜະລິດ ເກືອກິນ ແຕ່ 10 ໂຕນຕໍ່ມື້ ຂຶ້ນໄປ.<br>**2. ການຜະລິດເຄື່ອງດື່ມ:**<br>– ໂຮງງານຜະລິດເຫຼົ້າ ປະລິມານ ແຕ່ 500.000 ລິດ ຕໍ່ ປີຂຶ້ນໄປ;<br>– ໂຮງງານຜະລິດເບຍ ປະລິມານ 500.000 ຫາ 10.000.000 ລິດ ຕໍ່ປີ;<br>– ໂຮງງານຜະລິດເຫຼົ້າວາຍ ປະລິມານ 500.000 ຫາ 10.000.000 ລິດ ຕໍ່ປີ;<br>– ໂຮງງານຜະລິດເຄື່ອງດື່ມທີ່ບໍ່ມີທາດເຫຼົ້າ ປະລິມານ ແຕ່ 1.000.000 ລິດ ຕໍ່ປີຂຶ້ນໄປ.<br>**3. ການຜະລິດຢາສູບ:**<br>– ໂຮງງານຜະລິດຢາສູບ ແຕ່ 500 ໂຕນ ຕໍ່ປີຂຶ້ນໄປ.<br>**4. ການຜະລິດແຜ່ນແພ, ຜະລິດຕະພັນໜັງ ແລະ ຜະລິດຕະພັນອື່ນທີ່ກ່ຽວຂ້ອງກັບແຜ່ນແພ ແລະ ໜັງ:**<br>– ໂຮງງານຕຳແຜ່ນ, ຕັດຫຍິບ ທີ່ມີການຟອກ, ຍ້ອມສີ ທີ່ນຳໃຊ້ສານເຄມີ ເປັນຕົ້ນ ແຜ່ນແພ, ເສັ້ນຝ້າຍ ຫຼື ເສັ້ນໄຍ ແລະ ອື່ນໆ ທີ່ມີບໍລິມາດນ້ຳເປື້ອນຈະປ່ອຍອອກຈາກໂຮງງານ ແຕ່ 50 ແມັດກ້ອນ ຕໍ່ວັນຂຶ້ນໄປ;<br>– ໂຮງງານຜະລິດພົມ ທີ່ມີບໍລິມາດນ້ຳເປື້ອນຈະປ່ອຍອອກຈາກໂຮງງານ ແຕ່ 50 ແມັດກ້ອນ ຕໍ່ວັນຂຶ້ນໄປ;<br>– ໂຮງງານຕັດຫຍິບທີ່ມີແຮງງານເກີນ 800 ຄົນຂຶ້ນໄປ.<br>– ໂຮງງານເອືອບ ແລະ ນອດໜັງສັດ ແຕ່ 5 ໂຕນ ຕໍ່ມື້ຂຶ້ນໄປ;<br>– ໂຮງງານຜະລິດ ເຄື່ອງໃຊ້ຈາກໜັງສັດ ຫຼື ຂົນສັດ ທີ່ມີຂະບວນການໝັກ, ຟອກ, ຍ້ອມສີ ແຕ່ 10 ຫາ 50 ໂຕນ ຕໍ່ມື້.<br>**5. ການຜະລິດເຈ້ຍ ແລະ ຜະລິດຕະພັນເຈ້ຍ:**<br>– ໂຮງງານຜະລິດເຫຍື່ອເຈ້ຍ, ແຜ່ນເຈ້ຍ, ເຈ້ຍຫຸ້ມຫໍ່, ເຈ້ຍອ່ອນ, ເຈ້ຍແຂງ ທີ່ມີກຳລັງການຜະລິດ ແຕ່ 10 ຫາ 50 ໂຕນຕໍ່ມື້;<br>– ໂຮງພິມທີ່ນຳໃຊ້ເຈ້ຍເຂົ້າໃນການຜະລິດ ແຕ່ 10 ຫາ 50 ໂຕນຕໍ່ມື້. |

**6. ການຜະລິດນ້ຳມັນຈາກພືດກະສິກຳ ແລະ ການປຸງແຕ່ງຖ່ານເຜົາໄໝ້ເພື່ອເປັນເຊື້ອໄຟ:**
- ໂຮງກັ່ນ ຫຼື ໂຮງງານຜະລິດ ນ້ຳມັນຈາກພືດກະສິກຳ ເພື່ອບໍລິໂພກ ທຸກຂະໜາດ;
- ໂຮງງານປຸງແຕ່ງຖ່ານເຜົາໄໝ້ ເພື່ອເປັນເຊື້ອໄຟ ແຕ່ 5 ຫາ 10 ໂຕນຕໍ່ເດືອນ.

**7. ການຜະລິດເຄມີ ແລະ ຜະລິດຕະພັນເຄມີ:**
- ໂຮງງານຜະລິດສະບູ ກ້ອນ, ຝຸ່ນ, ແຫຼວ; ຜະລິດຕະພັນເພື່ອການຊັກລ້າງ ແຕ່ 3.000 ຫາ 5.000 ໂຕນ ຕໍ່ປີ;
- ສາງເກັບມ້ຽນວັດຖຸລະເບີດ, ເຄມີ ແລະ ຜະລິດຕະພັນເຄມີອັນຕະລາຍ ປະເພດ 2 ແລະ 3 ແລະ ຜະລິດຕະພັນອື່ນທີ່ມີສ່ວນປະສົມຂອງເຄມີອັນຕະລາຍ ແຕ່ 1 ຫາ 5 ໂຕນ ຕໍ່ປີ;
- ໂຮງງານຜະລິດເຄມີອັນຕະລາຍ ປະເພດ 4 ທຸກຂະໜາດ.

**8. ຜະລິດຕະພັນ ຢາງ ແລະ ປລາສະຕິກ:**
- ໂຮງງານຜະລິດຕະພັນປລາສະຕິກ ທີ່ນຳໃຊ້ສິ່ງເສດເຫຼືອປລາສະຕິກເປັນວັດຖຸດິບ ຈຳນວນ ແຕ່ 300 ຫາ 1.000 ໂຕນ ຕໍ່ປີ.
- ໂຮງງານປຸງແຕ່ງຢາງພາລາ ຈຳນວນ ແຕ່ 3.000 ໂຕນ ຕໍ່ປີຂຶ້ນໄປ.

**9. ແຮ່ອະໂລຫະອື່ນໆ:**
- ໂຮງງານຜະລິດ ແກ້ວ ແຕ່ 1.000 ໂຕນ ຕໍ່ປີຂຶ້ນໄປ;
- ໂຮງງານຜະລິດຊີມັງຈາກເຄິ່ງສຳເລັດຮູບ (ໃຊ້ກຼິ້ງເກີ ເປັນວັດຖຸດິບ) ແຕ່ 1.000 ໂຕນ ຕໍ່ປີລົງມາ;
- ໂຮງງານຜະລິດປູນຂາວ ທີ່ມີການເຜົາໄໝ້ ແຕ່ 1.000 ໂຕນ ຕໍ່ປີລົງມາ;

**10. ການຜະລິດໂລຫະຂັ້ນພື້ນຖານ:**
- ໂຮງງານຜະລິດ ເຫຼັກຂັ້ນຕົ້ນ ແລະ ເຫຼັກກ້າ ເພື່ອນຳໃຊ້ເປັນຜະລິດຕະພັນ ຈຳນວນ ແຕ່ 3.000 ຫາ 5.000 ໂຕນ ຕໍ່ປີ;
- ໂຮງງານການຫຼອມໂລຫະທີ່ບໍ່ແມ່ນເຫຼັກ ເປັນຕົ້ນ ການຫຼອມໂລຫະເຄິ່ງສຳເລັດຮູບ ເຊັ່ນ ອາລູມີນຽມ, ແມັກນີຊຽມ, ໄຕຕານຽມ, ສັງກະສີ ແລະ ອື່ນໆ ແຕ່ 1.000 ໂຕນ ຕໍ່ປີລົງມາ.

**11. ໂຮງງານຜະລິດ ເຄື່ອງຄອມພິວເຕີ, ເຄື່ອງອີເລັກໂທຼນິກ ແລະ ຜະລິດຕະພັນກ່ຽວກັບສາຍຕາ:**
- ໂຮງງານຜະລິດ ເຄື່ອງຄອມພິວເຕີ ທຸກຂະໜາດ;
- ໂຮງງານຜະລິດຫຼອດໄຟອີເລັກໂທຼນິກ ທຸກຂະໜາດ;
- ໂຮງງານຜະລິດເຄື່ອງໃຊ້ອີເລັກໂທຼນິກ ທຸກຂະໜາດ;
- ໂຮງງານຜະລິດຕະພັນກ່ຽວກັບສາຍຕາ ທຸກຂະໜາດ.

**12. ຜະລິດອຸປະກອນໄຟຟ້າ:**
- ໂຮງງານຜະລິດໝໍ້ໄຟ ທຸກຂະໜາດ;
- ໂຮງງານຜະລິດໝໍ້ແປງ ທຸກຂະໜາດ;
- ໂຮງງານຜະລິດອຸປະກອນໄຟຟ້າ ທຸກຂະໜາດ.

**13. ຜະລິດເຄື່ອງຈັກ ແລະ ອຸປະກອນ:**
- ໂຮງງານຜະລິດເຄື່ອງກົນຈັກໜັກ ທຸກຂະໜາດ;
- ໂຮງງານຜະລິດ ລິບ, ຂັ້ນໄດເລື່ອນ ທຸກຂະໜາດ;
- ໂຮງງານຜະລິດເຕົາຫຼອມ ທຸກຂະໜາດ.

**14. ຜະລິດເຄື່ອງປະກອບພາຫະນະ:**
- ໂຮງງານຜະລິດ ລົດໃຫຍ່, ຮ່າງລົດໃຫຍ່ ແລະ ເຄື່ອງປະກອບລົດໃຫຍ່ ທຸກຂະໜາດ;
- ໂຮງງານຜະລິດ ລົດຈັກ ແລະ ເຄື່ອງປະກອບລົດຈັກ ທຸກຂະໜາດ;
- ໂຮງງານປະກອບລົດຖີບ ແລະ ເຄື່ອງປະກອບລົດຖີບ ທຸກຂະໜາດ.

| | |
|---|---|
| | **15. ຜະລິດອຸປະກອນການຂົນສົ່ງ ແລະ ຜະລິດຕະພັນເຄື່ອງກໍ່ສ້າງ:**<br>– ໂຮງງານຜະລິດອຸປະກອນຂົນສົ່ງ ເປັນຕົ້ນ ເຮືອ, ລາງລົດໄຟ, ເຮືອບິນ ແລະ ຊິ້ນສ່ວນຕ່າງໆສໍາລັບການຜະລິດດັ່ງກ່າວ ທຸກຂະໜາດ;<br>– ໂຮງງານຜະລິດເຄື່ອງກໍ່ສ້າງ ເປັນຕົ້ນ ດິນຈີ່, ດິນຂໍ, ເຄື່ອງປັ້ນດິນເຜົາ, ດິນບ່ອກ, ກະເບື້ອງ, ກະໂລປູພື້ນ, ຊີແພັກ ແຕ່ 1.000 ຫາ 5.000 ແມັດກ້ອນຕໍ່ເດືອນ. |
| 6. | **ໂຄງການລົງທຶນ ຫຼື ກິດຈະການ ກໍ່ສ້າງໂຄງລ່າງພື້ນຖານ:**<br>– ການກໍ່ສ້າງຄອງລະບາຍນໍ້າເປື້ອນ ທຸກຂະໜາດ;<br>– ການກໍ່ສ້າງລະບົບບໍາບັດນໍ້າເປື້ອນ ຫຼື ສະຖານທີ່ບໍາບັດນໍ້າເປື້ອນ ທຸກຂະໜາດ;<br>– ການກໍ່ສ້າງຄອນໂດມິນຽມ, ອາພາດເມັ້ນ ທີ່ນອນໃນເຂດທຸກຍາກ, ຫ່າງໄກສອກຫຼີກ, ໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ບໍ່ເອື້ອອໍານວຍແກ່ການລົງທຶນແຕ່ 50 ຫາ 90 ຫ້ອງ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການກໍ່ສ້າງຄອນໂດມິນຽມ, ອາພາດເມັ້ນ ທີ່ນອນໃນເຂດທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອໍານວຍແກ່ການລົງທຶນແຕ່ 30 ຫາ 70 ຫ້ອງ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການກໍ່ສ້າງເຮືອນຈັດສັນ ທີ່ນອນໃນເຂດທຸກຍາກ, ຫ່າງໄກສອກຫຼີກ, ໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ບໍ່ເອື້ອອໍານວຍ ແກ່ການລົງທຶນແຕ່ 30 ຫາ 70 ຫຼັງ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການກໍ່ສ້າງເຮືອນຈັດສັນ ທີ່ນອນໃນເຂດທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອໍານວຍແກ່ການລົງທຶນແຕ່ 20 ຫາ 40 ຫຼັງ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການກໍ່ສ້າງໂຮງແຮມ ແລະ ບ້ານພັກ ທີ່ນອນໃນເຂດທຸກຍາກ, ຫ່າງໄກສອກຫຼີກ, ໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ບໍ່ເອື້ອອໍານວຍແກ່ການລົງທຶນ ໜ້ອຍກວ່າ 150 ຫ້ອງ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການກໍ່ສ້າງໂຮງແຮມ ແລະ ບ້ານພັກ ທີ່ນອນໃນເຂດທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອໍານວຍແກ່ການລົງທຶນ ໜ້ອຍກວ່າ 80 ຫ້ອງ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການກໍ່ສ້າງໂຄງລ່າງພື້ນຖານກິລາ-ກາຍະກໍາ ທີ່ນອນໃນເຂດທຸກຍາກ, ຫ່າງໄກສອກຫຼີກ, ໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ບໍ່ເອື້ອອໍານວຍແກ່ການລົງທຶນ ເນື້ອທີ່ດິນ ແຕ່ 5 ຫາ 20 ເຮັກຕາ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການກໍ່ສ້າງໂຄງລ່າງພື້ນຖານກິລາ-ກາຍະກໍາ ທີ່ນອນໃນເຂດທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອໍານວຍແກ່ການລົງທຶນ ເນື້ອທີ່ດິນ ແຕ່ 3 ຫາ 10 ເຮັກຕາ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການກໍ່ສ້າງສະໜາມກ໊ອບ ບໍ່ເກີນ 9 ຂຸມ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການກໍ່ສ້າງໂຮງໝໍ ທີ່ນອນໃນເຂດທຸກຍາກ, ຫ່າງໄກສອກຫຼີກ, ໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ບໍ່ເອື້ອອໍານວຍແກ່ການລົງທຶນ ບໍ່ເກີນ 150 ຕຽງ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການກໍ່ສ້າງໂຮງໝໍ ທີ່ນອນໃນເຂດທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອໍານວຍແກ່ການລົງທຶນ ບໍ່ເກີນ 80 ຕຽງ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການກໍ່ສ້າງທາງຫຼວງທີ່ເປັນການກໍ່ສ້າງໃໝ່ ປະກອບມີ ການກໍ່ສ້າງ ທາງຫຼວງເມືອງ, ທາງຕົວເມືອງ, ທາງຊົນນະບົດ, ທາງສະເພາະ ທຸກຂະໜາດ;<br>– ການກໍ່ສ້າງຄືນໃໝ່ ແລະ ການຍົກລະດັບມາດຕະຖານ ທາງຫຼວງ ປະກອບມີ ການກໍ່ສ້າງຄືນໃໝ່ ແລະ ການຍົກລະດັບມາດຕະຖານ ທາງຫຼວງແຂວງ, ທາງຫຼວງເມືອງ ທຸກຂະໜາດ;<br>– ການປັບປຸງ ຫຼື ຂະຫຍາຍສະໜາມບິນ, ເດີ່ນບິນ ທີ່ບໍ່ມີການຂະຫຍາຍພື້ນທີ່ເຂດປະຕິບັດການບິນ ຫຼື ເຂດສາທາລະນະ ທຸກຂະໜາດ;<br>– ການປັບປຸງທາງເດີນເຮືອຕາມແມ່ນໍ້າ ທີ່ເປັນສາຂາແມ່ນໍ້າຂອງ ຫຼື ສາຂາແມ່ນໍ້າອື່ນ ທຸກຂະໜາດ;<br>– ການສ້າງທ່າເຮືອ ໂດຍສານ ແລະ ຂົນສົ່ງສິນຄ້າທົ່ວໄປ ບໍ່ເກີນ 500 ໂຕນ (ບໍ່ລວມນໍ້າໜັກເຮືອ);<br>– ການສ້າງສະຖານີຄ່ຽນຖ່າຍສິນຄ້າ ທຸກຂະໜາດ; |

| | |
|---|---|
| | – ການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນ ຕາມແມ່ນ້ຳຂອງ ແລະ ສາຂາແມ່ນ້ຳຂອງ ຫຼື ສາຂາແມ່ນ້ຳອື່ນ ທີ່ນອນໃນເຂດທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອຳນວຍແກ່ການລົງທຶນ ແຕ່ 10 ກິໂລແມັດ ຂຶ້ນໄປ ຕໍ່ໜຶ່ງໂຄງການ ທີ່ບໍ່ມີການຈັດສັນ ແລະ ຍົກຍ້າຍປະຊາຊົນ;<br>– ການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນ ຕາມແມ່ນ້ຳຂອງ ແລະ ສາຂາແມ່ນ້ຳຂອງ ຫຼື ສາຂາແມ່ນ້ຳອື່ນ ທີ່ນອນໃນເຂດທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອຳນວຍແກ່ການລົງທຶນ ແຕ່ 1 ຫາ 10 ກິໂລແມັດ ຕໍ່ໜຶ່ງໂຄງການ ທີ່ມີການຈັດສັນ ແລະ ຍົກຍ້າຍປະຊາຊົນ;<br>– ກິດຈະການກໍ່ສ້າງສະຖານການຮຽນ-ການສອນຂອງການສຶກສາຊັ້ນສູງ ທຸກຂະໜາດ ເປັນຕົ້ນ ລະດັບອະນຸປະລິນຍາ, ປະລິນຍາຕີ, ປະລິນຍາໂທ, ປະລິນຍາເອກ ລວມທັງການສຶກສາ ລົງເລິກຂະແໜງວິຊາ, ຊ່ຽວຊານຂັ້ນໜຶ່ງ ແລະ ຊ່ຽວຊານຂັ້ນສອງ;<br>– ກິດຈະການກໍ່ສ້າງ ສະໜາມຂີ້ເຫຍື້ອ ແລະ ບ່ອນກຳຈັດຂີ້ເຫຍື້ອ ທີ່ບໍ່ເປັນອັນຕະລາຍ ແຕ່ 1.000 ຫາ 5.000 ໂຕນຕໍ່ປີ;<br>– ກິດຈະການກໍ່ສ້າງ ນ້ຳປະປາ, ສວນສາທາລະນະ, ສະຖານີຂົນສົ່ງ ຜູ້ໂດຍສານ ຫຼື ຂົນສົ່ງສິນຄ້າທາງບົກ ທຸກຂະໜາດ;<br>– ກິດຈະການກໍ່ສ້າງອ່າງກັກເກັບນ້ຳ ເພື່ອການສະໜອງນ້ຳປະປາ ແຕ່ 1.000.000 ຫາ 3.000.000 ແມັດກ້ອນຕໍ່ມື້;<br>– ກິດຈະການຕິດຕັ້ງເສົາ, ສາຍ ໂທລະຄົມມະນາຄົມ ແລະ ການສື່ສານ ທຸກຂະໜາດ;<br>– ກິດຈະການການສ້າງລະບົບຊົນລະປະທານ, ເໝືອງ, ຝາຍ ແລະ ຄອງລະບາຍນ້ຳ ທຸກຂະໜາດ;<br>– ກິດຈະການການສ້າງຂົວ ຢູ່ສາຂາແມ່ນ້ຳຂອງ ແລະ ແມ່ນ້ຳອື່ນ ທີ່ມີການກໍ່ສ້າງຂົວຂະໜາດກາງ ແລະ ຂະໜາດໃຫຍ່;<br>– ການພັດທະນາແຫຼ່ງທ່ອງທ່ຽວແບບອະນຸລັກ ໃນເຂດທຳມະຊາດ, ປະຫວັດສາດ, ເຂດມໍລະດົກ, ວັດທະນະທຳ ແລະ ເຂດທີ່ດິນປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ ທຸກລະດັບ ທີ່ລັດໄດ້ຈັດສັນໄວ້ ທຸກຂະໜາດ. |
| 7. | **ກິດຈະການ ສ້າງຫ້ອງທົດລອງ, ສູນວິໄຈວິທະຍາສາດ:**<br>– ຫ້ອງທົດລອງ ຫຼື ສູນວິໄຈ ດ້ານສິ່ງແວດລ້ອມ ສຳລັບ ບໍລິການດ້ານສິ່ງແວດລ້ອມ ທຸກຂະໜາດ ເປັນຕົ້ນ ການວິໄຈ ຄຸນນະພາບນ້ຳ, ອາກາດ, ດິນ, ສິ່ງລົບກວນ, ສານເຄມີອັນຕະລາຍ;<br>– ຫ້ອງທົດລອງ ຫຼື ສູນວິໄຈວິທະຍາສາດດ້ານສາທາລະນະສຸກ ທຸກຂະໜາດ;<br>– ຫ້ອງທົດລອງ ຫຼື ສູນວິໄຈດ້ານກະສິກຳ, ປ່າໄມ້ ທຸກຂະໜາດ;<br>– ຫ້ອງທົດລອງ ຫຼື ສູນວິໄຈດ້ານອາຫານສັດ ແລະ ຢາປົວສັດ ທຸກຂະໜາດ;<br>– ຫ້ອງທົດລອງ ຫຼື ສູນວິໄຈດ້ານທໍລະນີສາດ ທຸກຂະໜາດ;<br>– ຫ້ອງທົດລອງ ຫຼື ສູນວິໄຈດ້ານພະລັງງານທົດແທນ ທຸກຂະໜາດ ເປັນຕົ້ນ ພະລັງງານຊີວະມວນ, ພະລັງງານແສງຕາເວັນ. |

ຖ້າຫາກແມ່ນໂຄງການປູກໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອການຟື້ນຟູປ່າ, ການຄົ້ນຄວ້າທາງວິທະຍາສາດ, ການອະນຸລັກຊີວະນາໆພັນ, ປົກປັກຮັກສາແຫຼ່ງນ້ຳ ແລະ ສິ່ງແວດລ້ອມ ແມ່ນບໍ່ຈຳເປັນຕ້ອງດຳເນີນການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ.

**ມາດຕາ 3 ບັນຊີການຈັດແບ່ງກຸ່ມໂຄງການລົງທຶນ ຫຼື ກິດຈະການຕ່າງໆ ຕ້ອງດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ**

ບັນຊີໂຄງການລົງທຶນ ຫຼື ກິດຈະການຕ່າງໆ ທີ່ຕ້ອງດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ມີດັ່ງນີ້:

| ລ/ດ | ປະເພດໂຄງການລົງທຶນ ຫຼື ກິດຈະການຕ່າງໆ ຕ້ອງດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ |
|---|---|
| 1. | **ໂຄງການລົງທຶນ ຫຼື ກິດຈະການ ພະລັງງານ:**<br>– ການຜະລິດໄຟຟ້າດ້ວຍພະລັງງານນ້ຳ ສູງກວ່າ 5 ເມກາວັດ ຂຶ້ນໄປ;<br>– ການຜະລິດໄຟຟ້າດ້ວຍພະລັງງານນິວເຄຣຍ ແລະ ພະລັງງານໄຮໂດເຈນ ທຸກຂະໜາດ;<br>– ການຜະລິດໄຟຟ້າດ້ວຍພະລັງງານອາຍແກັດທຳມະຊາດ ທຸກຂະໜາດ;<br>– ການຜະລິດໄຟຟ້າດ້ວຍພະລັງງານລົມ ແຕ່ 50 ເມກາວັດ ຂຶ້ນໄປ;<br>– ການຜະລິດໄຟຟ້າດ້ວຍພະລັງງານແສງຕາເວັນ ແຕ່ 50 ເມກາວັດ ຂຶ້ນໄປ;<br>– ການພັດທະນາໄຟຟ້າຈາກພາກພື້ນດິນ ທຸກຂະໜາດ;<br>– ການຜະລິດໄຟຟ້າດ້ວຍພະລັງງານຄວາມຮ້ອນຖ່ານຫີນ ທຸກຂະໜາດ;<br>– ການຜະລິດໄຟຟ້າດ້ວຍພະລັງງານຄວາມຮ້ອນຈາກສິ່ງເສດເຫຼືອ ທຸກຂະໜາດ;<br>– ສະຖານີ ແລະ ສາຍສົ່ງໄຟຟ້າແຮງດັນ ແຕ່ 115 ກິໂລໂວນ ຂຶ້ນໄປ;<br>– ການພັດທະນາໂຄງການໄຟຟ້າ ດ້ວຍຊີວະມວນ ແຕ່ 5 ເມກາວັດ ຂຶ້ນໄປ. |
| 2. | **ໂຄງການລົງທຶນ ຫຼື ກິດຈະການ ນ້ຳມັນເຊື້ອໄຟ:**<br>– ການສ້າງທໍ່ຂົນສົ່ງນ້ຳມັນ ແລະ ອາຍແກັດທຳມະຊາດ ທຸກຂະໜາດ;<br>– ການຂຸດຄົ້ນນ້ຳມັນເຊື້ອໄຟ ຫຼື ອາຍແກັດທຳມະຊາດ ທຸກຂະໜາດ;<br>– ການສ້າງໂຮງງານກັ່ນ ຫຼື ໂຮງງານຜະລິດນ້ຳມັນຈາກພືດກະສິກຳ ເພື່ອນຳໃຊ້ເປັນເຊື້ອໄຟ ທຸກຂະໜາດ;<br>– ການສ້າງສາງເກັບນ້ຳມັນ ຫຼາຍກວ່າ 50.000 ແມັດກ້ອນ ຂຶ້ນໄປ. |
| 3. | **ໂຄງການລົງທຶນ ຫຼື ກິດຈະການ ແຮ່ທາດ:**<br>– ການຂຸດຄົ້ນແຮ່ທາດອະໂລຫະ ສຳລັບການກໍ່ສ້າງ ເຊັ່ນ: ຊາຍ, ຫີນແຮ່ ຢູ່ໃນແມ່ນ້ຳ ທີ່ມີບໍລິມາດຂຸດຄົ້ນ ແຕ່ 50.000 ແມັດກ້ອນຂຶ້ນໄປຕໍ່ປີ ແລະ/ຫຼື ເນື້ອທີ່ໜ້ານ້ຳ ຫຼາຍກວ່າ 4 ເຮັກຕາ;<br>– ການຂຸດຄົ້ນແຮ່ທາດອະໂລຫະ ສຳລັບການກໍ່ສ້າງ ເຊັ່ນ: ຫີນຜາ, ບໍ່ດິນ, ດິນດຳ, ດິນແດງ, ດິນໜຽວຂາວ, ຊາຍ ຢູ່ເທິງໜ້າດິນ ທີ່ມີບໍລິມາດຂຸດຄົ້ນ ແຕ່ 100.000 ແມັດກ້ອນຂຶ້ນໄປ ຕໍ່ປີ ແລະ/ຫຼື ເນື້ອທີ່ດິນ ຫຼາຍກວ່າ 4 ເຮັກຕາ;<br>– ການຂຸດຄົ້ນແຮ່ທາດອະໂລຫະ ສຳລັບ ການກໍ່ສ້າງ ແລະ ອຸດສາຫະກຳ ທີ່ນອນຢູ່ໃນແມ່ນ້ຳຂອງ ທຸກຂະໜາດ;<br>– ການດຳເນີນກິດຈະການແຮ່ທາດ ໃນໝວດແຮ່ທາດໂລຫະ ທຸກຂະໜາດ ປະກອບດ້ວຍ ອັງຕີມອນ, ອາກເຊນິກ, ບົກຊິດ, ບິສມຸດ, ໂຄມິດ, ໂກບານ, ທອງ, ຄຳ, ເງິນ, ອິນດຽມ, ເຫຼັກ, ກົ່ວ, ຊືນ, ສັງກະສີ, ມັງການ, ບາຫຼອດ, ໂມລິບເດັນ, ນິແກນ, ຕັງສະແຕນ, ຊາຍທີ່ມີແຮ່, ແຮ່ທາດມີໜ້ອຍ, ແຮ່ທາດຫາຍາກ, ແຮ່ທາດກຳມັນຕະພາບລັງສີ ແລະ ອື່ນໆ;<br>– ການດຳເນີນກິດຈະການແຮ່ທາດ ໃນໝວດແຮ່ທາດອະໂລຫະ ທຸກຂະໜາດ ປະກອບດ້ວຍ ບາຣິດ, ເບັນໂຕນິດ, ການຊິດ, ກູ້ຣິດ, ໂດໂລມິດ, ແກ້ວມໍລະກົດ, ແຟນສະປາ, ຟູອໍຣິດ, ກາກເບັດ, ກຣາຟິດ, ຫີນກາວ, ຣາລິດ, ກາວແລັງ, ຫີນປູນ, ມັກເຢຊິດ, ເກືອມັກເຢຊຽມ, ຫີນອ່ອນ (ມາເບີນ), ປາໂກດິດ, ມີກາ, ກວັກຊິດ, ຖ່ານຕົມ, ໂຟສຟາດ, ໂປຕາສ, ຣູບີ, ຊັບເຟຍ, ຕວກມາລີນ, ຫີນບາຊານ, ຫີນກຣານິດ, ອັງເດຊິດ, ກາໂບຣ, ແຊກປັງຕີນິດ, ຣີໂອຣິດ, ດີໂອຣິດ ແລະ ອື່ນໆ; |

| | |
|---|---|
| | – ການດຳເນີນກິດຈະການແຮ່ທາດ ໃນໝວດແຮ່ທາດພະລັງງານເຊື້ອໄຟ ທຸກຂະໜາດ ປະກອບດ້ວຍ ຖ່ານຫີນ, ນ້ຳມັນດິບ, ອາຍແກັດທຳມະຊາດ, ຫີນແຜ່ນບັນຈຸນ້ຳມັນ ແລະ ອື່ນໆ. |
| 4. | **ໂຄງການລົງທຶນ ຫຼື ກິດຈະການກະສິກຳ ແລະ ປ່າໄມ້:**<br>– ການລ້ຽງສັດໃຫຍ່ ເປັນຕົ້ນ ງົວ, ຄວາຍ, ມ້າ, ອູດ, ນົກກະຈອກເທດ ທີ່ນອນໃນເຂດທຸກຍາກ, ຫ່າງໄກສອກຫຼີກ, ໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ບໍ່ເອື້ອອຳນວຍແກ່ການລົງທຶນ ຫຼາຍກວ່າ 3.000 ໂຕ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການລ້ຽງສັດໃຫຍ່ ເປັນຕົ້ນ ງົວ, ຄວາຍ, ແບ້, ມ້າ, ອູດ, ນົກກະຈອກເທດ ທີ່ນອນໃນເຂດທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອຳນວຍແກ່ການລົງທຶນ ຫຼາຍກວ່າ 300 ໂຕ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການລ້ຽງໝູ ທີ່ນອນໃນເຂດທຸກຍາກ, ຫ່າງໄກສອກຫຼີກ, ໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ບໍ່ເອື້ອອຳນວຍແກ່ການລົງທຶນ ຫຼາຍກວ່າ 2.000 ໂຕ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>ການລ້ຽງໝູ ທີ່ນອນໃນເຂດທີ່ມີ ໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອຳນວຍແກ່ການລົງທຶນຫຼາຍກວ່າ 200 ໂຕ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ. |
| 5. | **ໂຄງການລົງທຶນ ຫຼື ກິດຈະການ ອຸດສາຫະກຳປຸງແຕ່ງ:**<br>**1. ການປຸງແຕ່ງຜະລິດຕະພັນສະບຽງອາຫານ:**<br>– ໂຮງງານຜະລິດແປ້ງ ຈຳນວນ ຫຼາຍກວ່າ 100.000 ໂຕນ ຕໍ່ປີ;<br>– ໂຮງງານຜະລິດ ນ້ຳຕານຊາຍດິບ ແລະ ນ້ຳຕານຊາຍ ທຸກຂະໜາດ.<br>**2. ການຜະລິດເຄື່ອງດື່ມ:**<br>– ໂຮງງານຜະລິດເບຍ ປະລິມານ ຫຼາຍກວ່າ 10.000.000 ລິດ ຕໍ່ປີ;<br>– ໂຮງງານຜະລິດເຫຼົ້າວາຍ ປະລິມານ ຫຼາຍກວ່າ 10.000.000 ລິດ ຕໍ່ປີ.<br>**3. ຜະລິດຕະພັນໜັງ ແລະ ຜະລິດຕະພັນອື່ນທີ່ກ່ຽວຂ້ອງກັບສັດ:**<br>– ໂຮງງານຜະລິດເຄື່ອງໃຊ້ຈາກໜັງສັດ ຫຼື ຂົນສັດ ທີ່ມີຂະບວນການໝັກ, ຟອກ, ຍ້ອມສີ ຈຳນວນ ຫຼາຍກວ່າ 50 ໂຕນ ຕໍ່ມື້.<br>**4. ການຜະລິດເຈ້ຍ ແລະ ຜະລິດຕະພັນເຈ້ຍ:**<br>– ໂຮງງານຜະລິດເຫຍື່ອເຈ້ຍ, ແຜ່ນເຈ້ຍ, ເຈ້ຍຫຸ້ມຫໍ່, ເຈ້ຍອ່ອນ ແລະ ເຈ້ຍແຂງ ທີ່ມີກຳລັງການຜະລິດ ຫຼາຍກວ່າ 50 ໂຕນ ຕໍ່ມື້;<br>– ໂຮງພິມທີ່ນຳໃຊ້ເຈ້ຍເຂົ້າໃນການຜະລິດ ຫຼາຍກວ່າ 50 ໂຕນ ຕໍ່ມື້.<br>**5. ການຜະລິດ ນ້ຳມັນ, ແກ໊ສທຳມະຊາດ, ຖ່ານເຜົາໄໝ້ ແລະ ຜະລິດຕະພັນນ້ຳມັນກັ່ນຕອງ:**<br>– ໂຮງກັ່ນນ້ຳມັນ ເປໂຕຣລຽມ ທຸກຂະໜາດ;<br>– ໂຮງງານ ແຍກ ຫຼື ແປຮູບ ແກ໊ດທຳມະຊາດ ທຸກຂະໜາດ;<br>– ໂຮງກັ່ນນ້ຳມັນເຕົາ ທຸກຂະໜາດ;<br>– ໂຮງງານປຸງແຕ່ງຖ່ານເຜົາໄໝ້ ເພື່ອເປັນເຊື້ອໄຟ ຫຼາຍກວ່າ 10 ໂຕນຕໍ່ເດືອນ;<br>– ໂຮງງານ ກັ່ນນ້ຳມັນ ຫຼື ຜະລິດນ້ຳມັນ ເຊື້ອໄຟ ແລະ ໄຮໂດຣຄາບອນ ທຸກຂະໜາດ.<br>**6. ການຜະລິດ ເຄມີ ແລະ ຜະລິດຕະພັນເຄມີ:**<br>– ໂຮງງານຜະລິດວັດຖຸລະເບີດ ແລະ ຜະລິດຕະພັນເຄມີອັນຕະລາຍ ປະເພດ 1, 2 ແລະ 3 ທຸກຂະໜາດ;<br>– ສາງເກັບມ້ຽນວັດຖຸລະເບີດ, ເຄມີ ແລະ ຜະລິດຕະພັນເຄມີອັນຕະລາຍ ປະເພດ 2 ແລະ 3 ແລະ ຜະລິດຕະພັນອື່ນທີ່ມີສ່ວນປະສົມຂອງເຄມີອັນຕະລາຍ ຫຼາຍກວ່າ 5 ໂຕນ ຕໍ່ປີ;<br>– ໂຮງງານຜະລິດສະບູ ກ້ອນ, ຝຸ່ນ, ແຫຼວ; ຜະລິດຕະພັນເພື່ອການຊັກລ້າງ ຫຼາຍກວ່າ 5.000 ໂຕນ ຕໍ່ປີ; |

| | |
|---|---|
| | – ໂຮງງານຜະລິດ ທາດອອກລິດ ຫຼື ທາດ ທີ່ໃຊ້ປ້ອງກັນ ຫຼື ປາບ ສັດຕູພືດ ຫຼື ແມງໄມ້ ໂດຍໃຊ້ຂະບວນການທາງເຄມີ ທຸກຂະໜາດ;<br>– ໂຮງງານຜະລິດ ປຸຍເຄມີ ເຊັ່ນ: ເກືອຟຣໍລັດ, ເກືອໂປຣຕັດ ທຸກຂະໜາດ.<br>**7. ຜະລິດຕະພັນ ຢາງ ແລະ ປລາສະຕິກ:**<br>– ໂຮງງານຜະລິດຕະພັນປລາສະຕິກ ທີ່ນຳໃຊ້ສິ່ງເສດເຫຼືອປລາສະຕິກ ເປັນວັດຖຸດິບ, ຜະລິດຕະພັນທີ່ໄດ້ຈາກປລາສະຕິກ ຫຼາຍກວ່າ 1.000 ໂຕນ ຕໍ່ປີ.<br>**8. ແຮ່ອະໂລຫະອື່ນໆ:**<br>– ໂຮງງານຜະລິດຊີມັງຄົບວົງຈອນ ທີ່ມີການເຜົາໄໝ້ ທຸກຂະໜາດ;<br>– ໂຮງງານຜະລິດຊີມັງຈາກເຄິ່ງສຳເລັດຮູບ (ໃຊ້ກຼິ້ງເກີ ເປັນວັດຖຸດິບ) ຫຼາຍກວ່າ 1.000 ໂຕນ ຕໍ່ປີ;<br>– ໂຮງງານຜະລິດປູນຂາວ ທີ່ມີການເຜົາໄໝ້ ຫຼາຍກວ່າ 1.000 ໂຕນ ຕໍ່ປີ.<br>**9. ການຜະລິດໂລຫະຂັ້ນພື້ນຖານ:**<br>– ໂຮງງານຜະລິດ ເຫຼັກຂັ້ນຕົ້ນ ແລະ ເຫຼັກກ້າ ເພື່ອນຳໃຊ້ເປັນຜະລິດຕະພັນ ຈຳນວນ ຫຼາຍກວ່າ 5.000 ໂຕນ ຕໍ່ປີ;<br>– ໂຮງງານການຫຼອມໂລຫະທີ່ບໍ່ແມ່ນເຫຼັກ ເປັນຕົ້ນ ການຫຼອມໂລຫະເຄິ່ງສຳເລັດຮູບ ເຊັ່ນ ອາລູມີນຽມ, ແມັກນີຊຽມ, ໄຕຕານຽມ, ສັງກະສີ ແລະ ອື່ນໆ ຫຼາຍກວ່າ 1.000 ໂຕນ ຕໍ່ປີ.<br>**10. ການຜະລິດແປຮູບ:**<br>– ໂຮງງານ ແປຮູບ (ຣີໄຊເຄິ້ນ) ສິ່ງເສດເຫຼືອ ເພື່ອນຳໃຊ້ຄືນໃໝ່ ທຸກຂະໜາດ ເປັນຕົ້ນ ສິ່ງເສດເຫຼືອເອເລັກໂຕຣນິກ, ຖ່ານໄຟສາຍ, ໝໍ້ໄຟເກົ່າ, ປລາສະຕິກ;<br>– ສະຖານທີ່ ຝັງກົບສິ່ງເສດເຫຼືອ ທຸກຂະໜາດ;<br>– ໂຮງງານ ເຜົາສິ່ງເສດເຫຼືອອັນຕະລາຍ ທຸກຂະໜາດ;<br>– ໂຮງງານ ເຜົາສິ່ງເສດເຫຼືອທົ່ວໄປ ທຸກຂະໜາດ. |
| 6. | **ໂຄງການລົງທຶນ ຫຼື ກິດຈະການ ກໍ່ສ້າງໂຄງລ່າງພື້ນຖານ:**<br>– ການຖົມ ບຶງ, ໜອງ, ແມ່ນ້ຳ ທຳມະຊາດ ທຸກຂະໜາດ;<br>– ການປ່ຽນແປງ ຫຼື ອວ່າຍ ແລວນ້ຳ ທຸກຂະໜາດ;<br>– ການພັດທະນາຕົວເມືອງໃໝ່ ທຸກຂະໜາດ;<br>– ການກໍ່ສ້າງຄອນໂດມິນຽມ, ອາພາດເມັ້ນ ທີ່ນອນໃນເຂດທຸກຍາກ, ຫ່າງໄກສອກຫຼີກ, ໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ບໍ່ເອື້ອອຳນວຍ ແກ່ການລົງທຶນ ຫຼາຍກວ່າ 90 ຫ້ອງ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການກໍ່ສ້າງຄອນໂດມິນຽມ, ອາພາດເມັ້ນ ທີ່ນອນໃນເຂດທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອຳນວຍແກ່ການລົງທຶນ ຫຼາຍກວ່າ 70 ຫ້ອງ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການກໍ່ສ້າງເຮືອນຈັດສັນ ທີ່ນອນໃນເຂດທຸກຍາກ, ຫ່າງໄກສອກຫຼີກ, ໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ບໍ່ເອື້ອອຳນວຍແກ່ການລົງທຶນ ຫຼາຍກວ່າ 70 ຫຼັງ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການກໍ່ສ້າງເຮືອນຈັດສັນ ທີ່ນອນໃນເຂດ ທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອຳນວຍແກ່ການລົງທຶນ ຫຼາຍກວ່າ 40 ຫຼັງ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການກໍ່ສ້າງໂຮງແຮມ ແລະ ບ້ານພັກ ທີ່ນອນໃນເຂດທຸກຍາກ, ຫ່າງໄກສອກຫຼີກ, ໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ບໍ່ເອື້ອອຳນວຍແກ່ການລົງທຶນ ແຕ່ 150 ຫ້ອງຂຶ້ນໄປ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການກໍ່ສ້າງໂຮງແຮມ ແລະ ບ້ານພັກ ທີ່ນອນໃນເຂດທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອຳນວຍແກ່ການລົງທຶນ ແຕ່ 80 ຫ້ອງຂຶ້ນໄປ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ;<br>– ການຮື້ຖອນຕຶກອາຄານຂະໜາດໃຫຍ່; |

| | |
|---|---|
| | - ການກໍ່ສ້າງໂຄງລ່າງພື້ນຖານກິລາ-ກາຍະກຳ ທີ່ນອນໃນເຂດທຸກຍາກ, ຫ່າງໄກສອກຫຼີກ, ໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ບໍ່ເອື້ອອຳນວຍແກ່ການລົງທຶນເນື້ອທີ່ດິນ ຫຼາຍກວ່າ 10 ເຮັກຕາຂຶ້ນໄປຕໍ່ໜຶ່ງໂຄງການ ຫຼື ກິດຈະການ; |
| | - ການກໍ່ສ້າງໂຄງລ່າງພື້ນຖານກິລາ-ກາຍະກຳ ທີ່ນອນໃນເຂດທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອຳນວຍແກ່ການລົງທຶນ ເນື້ອທີ່ດິນ ຫຼາຍກວ່າ 5 ເຮັກຕາ ຂຶ້ນໄປ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ; |
| | - ການກໍ່ສ້າງສະໜາມກ໊ອບ ຫຼາຍກວ່າ 09 ຂຸມ ຂຶ້ນໄປ ຕໍ່ໜຶ່ງໂຄງການ ຫຼື ກິດຈະການ; |
| | - ການກໍ່ສ້າງໂຮງໝໍ ທີ່ນອນໃນເຂດທຸກຍາກ, ຫ່າງໄກສອກຫຼີກ, ໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ບໍ່ເອື້ອອຳນວຍແກ່ການລົງທຶນ ຫຼາຍກວ່າ 150 ຕຽງ ຂຶ້ນໄປຕໍ່ໜຶ່ງໂຄງການ ຫຼື ກິດຈະການ; |
| | - ການກໍ່ສ້າງໂຮງໝໍ ທີ່ນອນໃນເຂດທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອຳນວຍແກ່ການລົງທຶນ ຫຼາຍກວ່າ 80 ຕຽງ ຂຶ້ນໄປຕໍ່ໜຶ່ງໂຄງການ ຫຼື ກິດຈະການ; |
| | - ການກໍ່ສ້າງທາງລົດໄຟ, ທາງດ່ວນ ທຸກຂະໜາດ; |
| | - ການກໍ່ສ້າງທາງຫຼວງທີ່ເປັນການກໍ່ສ້າງໃໝ່ ປະກອບມີ ການກໍ່ສ້າງ ທາງຫຼວງແຫ່ງຊາດ ແລະ ທາງຫຼວງແຂວງ; |
| | - ການກໍ່ສ້າງຄືນໃໝ່ ແລະ ການຍົກລະດັບມາດຕະຖານທາງຫຼວງ ປະກອບມີການກໍ່ສ້າງຄືນໃໝ່ ແລະ ການຍົກລະດັບມາດຕະຖານ ທາງຫຼວງແຫ່ງຊາດ; |
| | - ການປັບປຸງ ຫຼື ຂະຫຍາຍສະໜາມບິນ, ເດີ່ນບິນ ທີ່ມີການຂະຫຍາຍພື້ນທີ່ເຂດປະຕິບັດການບິນ ຫຼື ເຂດສາທາລະນະ ທຸກຂະໜາດ; |
| | - ການປັບປຸງທາງເດີນເຮືອຕາມແມ່ນ້ຳຂອງ ທຸກຂະໜາດ; |
| | - ການສ້າງທ່າເຮືອ ໂດຍສານ ແລະ ຂົນສົ່ງສິນຄ້າທົ່ວໄປ ຫຼາຍກວ່າ 500 ໂຕນ ຂຶ້ນໄປ (ບໍ່ລວມນ້ຳໜັກເຮືອ); |
| | - ການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນ ທີ່ເປັນສາຂາແມ່ນ້ຳຂອງ ຫຼື ສາຂາແມ່ນ້ຳອື່ນ ທີ່ນອນໃນເຂດທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອຳນວຍແກ່ການລົງທຶນ ຫຼາຍກວ່າ 5 ກິໂລແມັດ ຕໍ່ໜຶ່ງໂຄງການ; |
| | - ການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນ ຕາມແມ່ນ້ຳຂອງ ແລະ ສາຂາແມ່ນ້ຳຂອງ ຫຼື ສາຂາແມ່ນ້ຳອື່ນ ທີ່ນອນໃນເຂດທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອຳນວຍແກ່ການລົງທຶນ ຫຼາຍກວ່າ 10 ກິໂລແມັດ ຕໍ່ໜຶ່ງໂຄງການ ທີ່ມີການຈັດສັນ ແລະ ຍົກຍ້າຍປະຊາຊົນ; |
| | - ກິດຈະການກໍ່ສ້າງ ສະໜາມຂີ້ເຫຍື້ອ ແລະ ບ່ອນກຳຈັດຂີ້ເຫຍື້ອ ທີ່ບໍ່ອັນຕະລາຍ ຫຼາຍກວ່າ 5.000 ໂຕນ ຕໍ່ປີ; |
| | - ກິດຈະການກໍ່ສ້າງອ່າງກັກເກັບນ້ຳ ເພື່ອການຜະລິດ ແລະ ສະໜອງນ້ຳປະປາ ຫຼາຍກວ່າ 3.000.000 ແມັດກ້ອນ ຕໍ່ມື້; |
| | - ສູນການຄ້າ ທຸກຂະໜາດ; |
| | - ກິດຈະການກໍ່ສ້າງ ທ່າບົກ ຫຼື ໂລຊິດສະຕິກ ທຸກຂະໜາດ; |
| | - ກິດຈະການການສ້າງຂົວຢູ່ຕາມແມ່ນ້ຳຂອງ ທຸກຂະໜາດ; |
| | - ການພັດທະນາແຫຼ່ງທ່ອງທ່ຽວຄົບວົງຈອນ ເພື່ອຮອງຮັບການທ່ອງທ່ຽວ ເປັນຕົ້ນ ສະຖານທີ່ພັກແຮມ, ໂຮງແຮມ, ບ້ານພັກ, ຮ້ານອາຫານ, ການຄ້າ ແລະ ການບໍລິການ ອື່ນໆ ທຸກຂະໜາດ. |

ນອກຈາກນີ້ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແມ່ນໃຫ້ອີງຕາມຈຸດພິເສດ ແລະ ລັກສະນະຂອງໂຄງການ ດັ່ງນີ້:

1. ໂຄງການລົງທຶນ ແລະ ກິດຈະການ ທີ່ປະກອບດ້ວຍຫຼາຍກິດຈະການຍ່ອຍ ຊຶ່ງຕ້ອງດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ທີ່ນອນໃນຂອບເຂດພື້ນທີ່ດຽວກັນ ຕ້ອງສ້າງເປັນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສະບັບດຽວ ໂດຍກວມເອົາທຸກອົງປະກອບຂອງໂຄງການ ແລະ ກິດຈະການຍ່ອຍນັ້ນໂຮມເຂົ້າ

ກັນ. ກ່ອນຈະຈັດຕັ້ງປະຕິບັດກິດຈະການຍ່ອຍໃນເຂດພື້ນທີ່ໂຄງການ ຫຼື ກິດຈະການໃດໜຶ່ງ ຕ້ອງໄດ້ສ້າງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ສະເພາະຂອງກິດຈະການຍ່ອຍດັ່ງກ່າວ ແລ້ວສະເໜີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາ ແລະ ຮັບຮອງ;

2. ໂຄງການລົງທຶນ ແລະ ກິດຈະການ ທີ່ມີກິດຈະກຳດຽວກັນ ແຕ່ດຳເນີນໃນຫຼາຍພື້ນທີ່ ຕ້ອງດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ສະບັບດຽວທີ່ກວມເອົາທຸກພື້ນທີ່ທັງໝົດ ແລ້ວສະເໜີຫາກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາອອກໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຮັບຮອງໂຄງການລົງທຶນ ແລະ ກິດຈະການດັ່ງກ່າວ. ກ່ອນຈະຈັດຕັ້ງປະຕິບັດກິດຈະການ ໃນແຕ່ລະເຂດພື້ນທີ່ໂຄງການ ຕ້ອງໄດ້ສ້າງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມສະເພາະຂອງກິດຈະການດັ່ງກ່າວ ແລ້ວສະເໜີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາອອກໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຮັບຮອງໂຄງການລົງທຶນ ແລະ ກິດຈະການ ໃນພື້ນທີ່ດັ່ງກ່າວນັ້ນເສຍກ່ອນ;

3. ການສ້າງຕັ້ງເຂດເສດຖະກິດພິເສດ, ນິຄົມອຸດສາຫະກຳ, ການພັດທະນາຕົວເມືອງໃໝ່ ນອກຈາກດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ທີ່ກວມລວມເອົາທັງໝົດເຂດແລ້ວ ກ່ອນຈັດຕັ້ງປະຕິບັດໂຄງການ ຫຼື ກິດຈະການຍ່ອຍ ທີ່ນອນໃນເຂດດັ່ງກ່າວ ຕ້ອງດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຕາມບັນຊີທີ່ໄດ້ກຳນົດໄວ້ໃນຕາຕະລາງຂ້າງເທິງນີ້.

**ມາດຕາ 4 ການດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ໃນໂຄງການລົງທຶນ ຫຼື ກິດຈະການທີ່ບໍ່ໄດ້ກຳນົດໄວ້ບັນຊີການຈັດແບ່ງກຸ່ມໂຄງການລົງທຶນ ແລະ ກິດຈະການຕ່າງໆ**

ໃນກໍລະນີທີ່ໂຄງການລົງທຶນ ຫຼື ກິດຈະການໃດໜຶ່ງ ທີ່ບໍ່ໄດ້ກຳນົດໄວ້ບັນຊີການຈັດແບ່ງກຸ່ມໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ແລະ ມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ເຈົ້າຂອງໂຄງການ ຫຼື ກິດຈະການຕ່າງໆ ຕ້ອງປະສານສົມທົບກັບກົມສິ່ງແວດລ້ອມ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອດຳເນີນການກັ່ນຕອງ ໂດຍອີງໃສ່ຂໍ້ມູນໂຄງການ ຫຼື ກິດຈະການນັ້ນ ໃນການພິຈາລະນາກ່ຽວກັບຄວາມຈຳເປັນ ຫຼື ບໍ່ຈຳເປັນໃນການດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ.

**ມາດຕາ 5 ການຈັດຕັ້ງປະຕິບັດ**

ກົມສິ່ງແວດລ້ອມ ປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

**ມາດຕາ 6 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງສະບັບເລກທີ 8056/ກຊສ, ລົງວັນທີ 17 ທັນວາ 2013 ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ບັນຊີໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ຈະຕ້ອງດຳເນີນການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ.

ຂໍ້ກຳນົດໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ອນແຕ່ຖືກຍົກເລີກ.

**ລັດຖະມົນຕີ**

ນ.ບຸນຄຳ ວໍລະຈິດ